ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກອຸດສາຫະກຳ ແລະ ການຄ້າ

----2923
ເລກທີ........./ພອຄ.ນວ.ກຕ
ວັນທີ..31..ທັນວາ..2025

## ແຈ້ງການ

ເຖິງ: ບັນດາ ບໍລິສັດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ ພາຫະນະ ຢູ່ນະຄອນຫຼວງວຽງຈັນ.

ເລື່ອງ: ການຄຸ້ມຄອງອອກອະນຸຍາດນຳເຂົ້າ ແລະ ສົ່ງອອກ ລົດປະເພດ 02 ລໍ້ ແລະ 03 ລໍ້.

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກອຸດສະຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ສະບັບເລກທີ 196/ຈນວ, ລົງວັນທີ 24 ກຸມພາ 2023;
- ອີງຕາມດຳລັດວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແບ່ງຂັ້ນຄຸ້ມຄອງທຸລະກິດຍານພາຫະນະທາງບົກ, ສະບັບເລກທີ 0023/ອຄ, ລົງວັນທີ 06 ມັງກອນ 2022;
- ອີງຕາມບົດບັນທຶກກອງປະຊຸມຝຶກອົບຮົມການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ຄັ້ງວັນທີ 30 ຕຸລາ 2025.

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ນັບແຕ່ວັນທີ 02 ມັງກອນ 2026 ເປັນຕົ້ນໄປ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແມ່ນຈະເລີ່ມຈັດຕັ້ງປະຕິບັດການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ພາຫະນະ ປະເພດ 02 ລໍ້ ແລະ 03 ລໍ້ ຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການແບ່ງຂັ້ນຄຸ້ມຄອງທຸລະກິດຍານພາຫະນະທາງບົກມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຄຸ້ມຄອງການອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ພາຫະນະປະເພດ 02 ລໍ້ ແລະ 03 ລໍ້ ສະບັບເລກທີ 0023/ອຄ, ລົງວັນທີ 06 ມັງກອນ 2012 ແລະ ແຈ້ງການຂອງກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບ ການອອກໃບອະນຸຍາດນຳເຂົ້າສິນຄ້າປະເພດພາຫະນະ ໂດຍຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ ສະບັບເລກທີ 2369/ກຂອ, ລົງວັນທີ 25 ກໍລະກົດ 2022. ສະນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດທີ່ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກພາຫະນະ ປະເພດ 02 ລໍ້ ແລະ 03 ລໍ້ ແມ່ນໃຫ້ຂໍໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ໂດຍຜ່ານລະບົບດັ່ງກ່າວ ນຳຂະແໜງການຄ້າຕ່າງປະເທດ, ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ໂທ: 021 413212, 02099996547-02095335752 ຖະໜົນ 450 ປີ, ບ້ານ ໂຊກໃຫຍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າພະແນກ

ກະຊວງອຸດສາຫະກຳ ແລະ ການຄ້າ
ພະແນກ ອຸດສາຫະກຳ ແລະ ການຄ້າ
ນະຄອນຫຼວງວຽງຈັນ

ຄຳເປີ້ນ ວໍລະເດດ

ບ່ອນສົ່ງ:

| | |
|---|---|
| - ກົມການຄ້າຕ່າງປະເທດ | 1 ສະບັບ (ເພື່ອຮຽນລາຍງານ) |
| - ກົມພາສີ ກະຊວງການເງິນ | 1 ສະບັບ (ເພື່ອຮຽນລາຍງານ) |
| - ທ່ານ ຫົວໜ້າພາສີ ປະຈຳ ນວ | 1 ສະບັບ ເພື່ອຊາບ |